# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

# ປະຈຳວັນເສົາ ວັນທີ 4 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດ ການຖະແຫຼງຂ່າວຂອງຄະນະສະເພາະກິດ **ປະຈຳວັນເສົາ ວັນທີ 4 ກັນຍາ ປີ 2021**.

- ຂ້າພະເຈົ້າ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ໃນ ສປປ ລາວ, ໃນໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 3 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **3,180** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **156** ຄົນ ເຊິ່ງ**ຕິດເຊື້ອໃນຊຸມຊົນ 64 ຄົນ** ເປັນຜູ້ສຳຜັດໃກ້ຊິດນຳຜູ້ຕິດເຊື້ອທີ່ຜ່ານມາ ແລະ **ກຳລະນີນຳເຂົ້າ ມີ 92 ຄົນ** ຈາກ ສາລະວັນ 46 ຄົນ, ສະຫວັນນະເຂດ 17 ຄົນ, ຈຳປາສັກ 12 ຄົນ, ຫຼວງພະບາງ 7 ຄົນ, ນະຄອນຫຼວງວຽງຈັນ 7 ຄົນ, ຄຳມ່ວນ 2 ຄົນ, ແລະ ໄຊຍະບູລີ 1 ຄົນ ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກປະເທດເພື່ອນບ້ານ ເຂົ້າຕາມຈຸດຜ່ານແດນສາກົນ.

**ລາຍລະອຽດ ຜູ້ຕິດເຊື້ອໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ແມ່ນເປັນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອທີ່ຜ່ານມາລາຍລະອຽດດັ່ງນີ້:**

- ຄຳມ່ວນ 25 ຄົນ,
- ຈຳປາສັກ 20 ຄົນ,
- ສະຫວັນນະເຂດ 6 ຄົນ,

- ຫຼວງພະບາງ 5 ຄົນ,
- ບໍ່ແກ້ວ 2 ຄົນ

1. ນະຄອນຫລວງ ວຽງຈັນ: 06 ຈາກ ຊຸມຊົນ ຊຶ່ງມີດັ່ງລຸ່ມນີ້:

04 ຄົນ ຈາກ ບ້ານຈອມເພັດເໜືອ, ເມືອງ ສີສັດຕະນາກມີ (03 ຄົນ, ແມ່ນ ຄອບຄົວດຽວກັນ) ແລະ ອີກ 01 ຄົນ ກຳມະກອນ ເຊື່ອມໂຍງກັບ ກຸ່ມ ບໍລິສັດຂົນສົ່ງ ທາງບົກ ທາງນ້ຳ. 01 ຄົນ ຈາກ ບ້ານ ຫາດຊາຍຂາວ, ເມືອງ ຫາດຊາຍຟອງ, ພົວພັນ ກັບຜູ້ຕິດເຊື້ອຜ່ານມາແລ້ວ 01 ຄົນ ຈາກ ບ້ານຫນອງແວງ ເມືອງຫາດຊາຍຟອງ (ອົງການ room to read),

2. ສະຫວັນນະເຂດ: ຊຸມຊົນ 06ຄົນ, ພ້ອມດຽວກັນ ມີຜູ້ເສັຍຊີວິດໜຶ່ງຄົນ;

- ບ້ານສະພານເຫນືອ ມີ 02 ຄົນ ທີ່ພົວພັນກັບກໍລະນີຕິດເຊື້ອຜ່ານມາ,
- ບ້ານຫນອງຜື ມີ 01 ກໍລະນີ ເປັນເມຍພະນັກງານແພດ ຢູ່ຕຶກເດັກໂຮງຫມໍແຂວງ,
- ບ້ານວຽງສະຫ້ອນ, ບ້ານໂພນສະຫວ່າງເຫນືອ ແລະ ບ້ານລັດຕະນະລັງສີໃຕ້ ມີບ້ານລະ 01 ຄົນ ແຕ່ຍັງບໍ່ຮູ້ແຫລ່ງທີ່ມາຂອງການຕິດເຊື້ອ.

3. ຈໍາປາສັກ: 20 ຄົນ ມາຈາກ ກຸ່ມ ທີ່ເຊື່ອມໂຍງ ກັບກຸ່ມ ໂຮງໝໍ ຊຸມຊົນເມືອງ ປະທຸມພອນ ທີ່ລາຍງານໃນວັນ ສອງວັນຜ່ານມາ

ມາດຕະການທີ່ໄດ້ຈັດຕັ້ງປະຕິບັດ:

- ປິດໂຮງໝໍ ເພື່ອຂ້າເຊື້ອ ແລະຈັດສັນພະນັກງານປະຈໍາການ
- ສືບຕໍ່ຄົ້ນຫາຜູ້ສໍາຜັດໃກ້ຊິດ ເພື່ອສືບຕໍ່ເກັບຕົວຢ່າງ ແລະ ຈໍາກັດບໍລິເວນ
- ສືບຕໍ່ຕັ້ງຈຸດເກັບຕົວຢ່າງຢູ່ເມືອງປະທຸມພອນ ແລະ ເມືອງອື່ນ

- ປິດບ້ານທີ່ມີຜູ້ຕິດເຊື້ອໃໝ່
- ໂຄສະນາສຸຂະສຶກສາໃນບ້ານເຂດສ່ຽງ

4. ຄໍາມ່ວນ: ຊຸມຊົນ 25 ຄົນ

- 24 ຄົນ ຈາກຊຸມຊົນ ຫວຽດນາມ ຢູ່ ຕະຫລາດ ຫລັກ 2 ແລະ 3 (ເກັບຕົວຢ່າງທັງໝົດ 120 ຕົວຢ່າງ)
- ແລະ ອີກ 1 ຄົນ ຈາກບ້ານ ບົງ ແມ່ນຜູ້ສໍາຜັດໃກ້ຊິດກ່ອນຫນ້ານີ້ກັບກໍລະນີຢູ່ເມືອງຫີນບູນ

5. ບໍ່ແກ້ວ: 2 ຄົນ; ຊື່ງເປັນ ກໍລະນີ ຊຸມຊົນ ຈາກບ້ານຂຸນບົງ, ເມືອງ ຕົ້ນເຜີ້ງ.

6. ແຂວງຫລວງພະບາງ: ຊຸມຊົນ 05 ຄົນ

- 03 ຄົນແມ່ນຄອບຄົວດຽວກັນ (ພໍ່, ແມ່ ແລະ ລູກ) ຢູ່ບ້ານພູຊ້າງຄໍາ ນະຄອນຫລວງພະບາງ ທີ່ເປັນເຊື້ອມໂຍງກັບບ້ານ ໂຄມຂວາງ ທີ່ເຄີຍລາຍງານຜ່ານມາ;

- 01 ຄົນ ຈາກ ບ້ານປ່າໄຜ່
- 01 ຄົນຈາກ ບ້ານນາຝາຍ ເມືອງນານ

➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

- ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ສຳລັບ ນະຄອນຫຼວງວຽງຈັນນີ້ ແມ່ນ ຢູ່**ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຮອດ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີລາຍງານຄົນເຈັບຕິດເຊື້ອ.
- ສຳລັບແຂວງອື່ນ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກຳນົດໄວ້.

➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **15,761 ຄົນ**, ເສຍຊີວິດສະສົມ **16** ຄົນ (ໃໝ່ 1 ຄົນ) ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **5,568** ຄົນ.

➢ **ລາຍລະອຽດຄົນເຈັບເສຍຊີວິດໃໝ່:** ເພດຊາຍ ອາຍຸ 31 ປີ, ບ້ານ ໜອງເດີນ, ເມືອງ ສອງຄອນແຂວງ ສະຫວັນນະເຂດ. ຕິດເຊື້ອໃນວັນທີ 12 ສິງຫາ 2021 ແລະ ໄດ້ຮັບການປິ່ນປົວ, ໄລຍະປິ່ນປົວບໍ່ມີອາການຫຍັງ ມີແຕ່ມັກເຈັບກະເພາະເປັນບາງຄັ້ງຄາວ, ຮອດວັນທີ່ 30 ສິງຫາ 2021 ມີອາການໄຂ້, ເຈັບກະເພາະຮຸນແຮງ ແຕ່ອາການຊີວິດປົກກະຕິດີ ໝໍໄດ້ໃຫ້ຢາຕາມອາການ ແລະ ບັນເທົາລົງ, ຮອດເວລາ 11:00ມ ຂອງວັນທີ່ 31 ສິງຫາ 2021 ຜູ້ກ່ຽວເມື່ອຍ, ມີຮາກອອກເລືອດ ແລະ ກະວົນກະວາຍ ອາການຊີວິດບໍ່ປົກກະຕິ ຄວາມດັນເລືອດສູງ 170/100, ຊີບພະຈອນ 116 ເທື່ອ, ປະລິມານອົກຊີເຊນ

ໃນເລືອດ 77 ເປີເຊັນ, ໝໍໄດ້ໃຫ້ຢາເຊີດຊູ ຈົນຮອດເວລາ 17:25 ຄົນເຈັບເສຍຊີວິດ, ທາງແຂວງໄດ້ມ້ຽນສົບຕາມລະບຽບຫຼັກການ

- **ສຳລັບ ບ້ານແດງທີ່ຖືກກຳນົດເປັນບ້ານແດງໃໝ່ແມ່ນບໍ່ມີ ຍັງເຫຼືອແຕ່ບ້ານແດງເກົ່າ.**

- **ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ**
  - ວັນທີ 3 ກັນຍາ 2021 ມີຜູ້ເດີນທາງຜ່ານເຂົ້າມາດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **2,725** ຄົນ
  - ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **105** ສູນ ແລະ **51** ໂຮງແຮມ ມີຜູ້ຈຳກັດບໍລິເວນ **8,142** ຄົນ.

**ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກການລະບາດ COVID-19 ຍັງບໍ່ມີທ່າອ່ຽງທີ່ຈະຢຸດນິ້ງເທື່ອ ເຊີ່ງຕົວເລກຜູ້ຕິດເຊື້ອສະສົມທັງໝົດ 220.584.600 (693.558ໃໝ່), ເສຍຊີວິດທັງໝົດ 4.566.120 (10.632 ໃໝ່), ປິ່ນປົວຫາຍດີ 197.081.512 (539.543ໃໝ່).
- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ສໍາລັບປະເທດ ຫວຽດນາມມີລາຍງານຜູ້ຕິດເຊື້ອໃໝ່ປະຈໍາວັນ 14,922 ຄົນ ແລະ ເສຍຊີວິດໃນມື້ດຽວ 308 ຄົນ, ຮອງລົງມາ ແມ່ນ ປະເທດໄທ ມີຜູ້ຕິດເຊື້ອ 14,653 ແລະ ເສຍຊີວິດໃນມື້ດຽວ 271 ຄົນ. ປະເທດມຽນມ້າ ມີຜູ້ຕິດເຊື້ອ 3,410 ແລະ ເສຍຊີວິດໃນມື້ດຽວ 93 ຄົນ. ປະເທດກໍາປູເຈ້ຍ ມີຜູ້ຕິດເຊື້ອ 491 ແລະ ເສຍຊີວິດໃນມື້ດຽວ 9 ຄົນ. ປະເທດຈີນ ມີຜູ້ຕິດເຊື້ອ 28 ແລະ ເສຍຊີວິດໃນມື້ດຽວ 0 ຄົນ.

ສະພາບການສັກວັກຊິນໂຄວິດ-19 ແລະ ຈໍານວນເປີເຊັນທີ່ໄດ້ສັກຢາວັກຊິນທັງໝົດທົ່ວປະເທດ: ແມ່ນສັກເຂັມທີ 1 ໄດ້ 2.537.992 (ອັດຕາປົກຄຸມ 34.59%) ແລະ ສັກຄົບ = 1.831.021 (24.95 %)

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ດັ່ງທີ່ພວກເຮົາຮູ້ກັນແລ້ວວ່າ ພະຍາດ ໂຄວິດ-19 ມີການພັດທະນາ ແລະ ປັບພັນທຸກໍາໂຕເອງຂອງພວກມັນໄປເລື້ອຍໆ, ໂຄວິດ-19 ສາຍພັນເດວຕາ (B.1.617.2) ທີ່ກໍາລັງລະບາດໃນຫຼາຍປະເທດລວມທັງບ້ານເຮົາ. ປະຈຸບັນ ນັກວິທະຍາສາດໄດ້ພົບວ່າສາຍພັນນີ້ໄດ້ມີການປັບປ່ຽນພັນທຸກໍາເພີ້ມຂຶ້ນເອີ້ນວ່າ ເດວຕາບວກ ຫຼື ສາຍພັນ ເດວຕາ ຍ່ອຍ ປະກອບມີ AY.4, AY.6, AY.10, AY.12. ຜ່ານມາອັດຕາການແຜ່ເຊື້ອ ຂອງສາຍພັນ ອູຫັນ ມາສາມາດແຜ່ໄປໄດ້ 2-3 ຄົນ, ອານຟ້າ 4-5 ຄົນ ແລະ ເດຕາ 5-8 ຄົນ ສໍາລັບປະຈຸບັນຍັງບໍ່ມີການຢັ້ງຢືນ

ວ່າສາຍພັນຍ່ອຍໂຕໃດຂອງເດວຕາ ມີອັດຕາການແຜ່ເຊື້ອໄດ້ຫຼາຍກວ່າກັນຊຳໃດ. ເຊິ່ງມັນມີ ຄວາມສາມາດໃນການສົ່ງເຊື້ອ ຈາກຄົນນຶ່ງໄປຫາອີກຄົນໜຶ່ງໄດ້ໄວຂຶ້ນກວ່າ ສາຍພັນເດວຕາທຳ ມະດາ ແລະ ມີຄວາມເປັນໄປໄດ້ສູງ ທີ່ວິທີການປິ່ນປົວດ້ວຍພູມຄຸ້ມກັນ Monoclonal antiboday therapy ຫຼຸດຜ່ອນປະສິດທິພາບລົງ. ສາຍພັນນີ້ມີຄວາມກ່ຽວຂ້ອງກັບສາຍພັນ ເດວຕາ ເປັນສາຍພັນທີ່ໜ້າເປັນຫວງ ພົບເປັນຄັ້ງທຳອິດ ຢູ່ປະເທດອິນເດຍ ໃນປີກາຍນີ້ ຄາດ ວ່າເປັນສາເຫດ ເຮັດໃຫ້ເກີດການລະບາດ ໃນຊວງລະດູຮ້ອນ ເຮັດໃຫ້ມີຜູ້ເສຍຊີວິດເປັນຈຳ ນວນຫຼວງຫຼາຍ. ນອກຈາກນີ້ ພົບສາຍພັນ ມິວ ພົບຄັ້ງທຳອິດໃນຕົ້ນເດືອນມັງກອນຢູ່ປະເທດ ໂຄລົມເບຍ ແລະ ປະຈຸບັນໄດ້ແຜ່ກະຈ່າຍໄປ ຫຼາຍເຖິງ 40 ປະເທດ. ເຊິງອົງການອະນາໄມ ໂລກກໍ່ໄດ້ຈັດເປັນສາຍພັນທີ່ຈະຕ້ອງໄດ້ເຝົ້າລະວັງ ແລະ ຈະຕິດເຊື້ອໄດ້ງ່າຍຄືສາຍພັນເດວຕ້າ. ພວກເຮົາຈະຕ້ອງໄດ້ຕິດຕາມຕໍ່ໄປ.

- ເນື່ອງຈາກພົບມີການລະບາດໃນຊຸມຊົນ ໃນຫຼາຍແຂວງ ເຊິ່ງຜູ້ຖືກກວດພົບເຊື້ອແມ່ນໄດ້ຖືກສົ່ງໄປຮັບການປິ່ນປົວ ແຕ່ສຳລັບຜູ້ສຳຜັດໃກ້ຊິດ ໂດຍສະເພາະແມ່ນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອຂັ້ນ 1 (C1) ຕ້ອງໄດ້ແຍກຕົນເອງເພື່ອຈຳກັດບໍລິເວນຕົນເອງເປັນເວລາ 14 ວັນ. ດັ່ງນັ້ນ ຈຶ່ງບໍ່ສາມາດປະຕິບັດໜ້າທີ່ໄດ້ ຍົກເວັ້ນແຕ່ເຮັດວຽກທາງ ອອນລາຍ, ດັ່ງນັ້ນຈອ່ງສະເໜີໃຫ້ ສຳນັກງານ, ອົງການ, ບໍລິສັດຕ່າງໆ ແມ່ນຕ້ອງໄດ້ອະນາໄມ້ຂ້າເຊື້ອສະຖານທີ່ເຮັດວຽກຂອງທັງຜູ້ຕິດເຊື້ອ ແລະ ສຳຜັດ ແລະ ໃຫ້ຈັດຕັ້ງພະນັກງານ ຫຼື ເຈົ້າໜ້າທີມາເຮັດວຽກແທນເພື່ອຮັບປະກັນບໍ່ໃຫ້ມີການແຜ່ເຊື້ອ.
- ການລະບາດຂອງພະຍາດນີ້ທັງໃນທົ່ວໂລກ ແລະ ປະເທດເຮົາ ແມ່ນຍັງມີຕົວເລກຜູ້ຕິດເຊື້ອເພີ່ມຂຶ້ນ ໂດຍສະເພາະແມ່ນການຕິດເຊື້ອໃນຊຸມຊົນແມ່ນຄ້ອນຂ້າງໜ້າເປັນຫ່ວງ ເພາະມັນໄດ້ແຜ່ໄປໃນຫຼາຍບ້ານ ຫຼາຍເມືອງ ແລະ ເກືອບທຸກ ແຂວງແລ້ວ, ແລະ ກໍລະນີທີພົບ ແມ່ນໄດ້ເກີດຂຶ້ນກັບຜູ້ທີ່ໄດ້ສຳພັດກັບຄົນທີ່ຕິດເຊື້ອຜ່ານມາ ລວມທັງພະນັກງານດ່ານໜ້າທີ່ໄດ້ເຮັດ

ວຽກໃກ້ຊິດກັບຜູ້ຕິດເຊື້ອ, ປັດໃຈນີ້ສະແດງໃຫ້ພວກເຮົາເຫັນໄດ້ວ່າ ອາດຈະມີການປົ່ມເຊື້ອໃນເຂດນັ້ນມາເປັນເວລາໃດນຶ່ງ. ສະນັ້ນ ອີກເທື່ອນຶ່ງຢາກຮຽກຮ້ອງໃຫ້ບັນດາທ່ານ ປະຕິບັດຕາມມາດຕະການທີ່ໄດວາງອອກຢ່າງເຄັ່ງຄັດ

- ແລະ ຢາກຂໍແຈ້ງເຖິງ ພໍ່ແມ່ຜູ້ປົກຄອງ, ເຈົ້າຂອງໂຮງຮຽນ ທີ່ໄດ້ລົງທະບຽນເພື່ອກຽມຈະເປີດການຮຽນການສອນນັ້ນ. ສໍາລັບນະຄອນຫຼວງວຽງຈັນ ແລະ ແຂວງທີ່ມີການລະບາດໃນຊຸມຊົນ ໂດຍອີງຕາມແຈ້ງການເລກທີ 1094/ຫສນຍ ລົງວັນທີ 31 ສິງຫາ 2021 (ຂໍ້ 1.12) ແລະ ຄໍາສັ່ງຂອງເຈົ້າຄອງນະຄອນຫຼວງ ເລກທີ 015/ຈນອ, ລົງວັນທີ 30 ສິງຫາ 2021 (ຂໍ້ 2.10) ແມ່ນ ປິດ ການຮຽນການສອນທຸກຊັ້ນທຸກສາຍລວມທັງການເສັງເຂົ້າສາຍວິຊາຊີບຕ່າງໆ ແລະ ມີຄວາມຈໍາເປັນຕ້ອງໄດ້ເລື່ອນການເປີດອອກໄປກ່ອນ ຈົນກວ່າຈະມີການປະເມີນ ສະພາບການລະບາດຂອງພະຍາດຄືນໃໝ່.

- ອີກປະການໜຶ່ງເພື່ອປະຕິບັດຕາມຄໍາສັ່ງ ໃນບຸນຫໍ່ເຂົ້າທີ່ຈະມາເຖິງນີ້ແມ່ນຢາກຮຽກຮ້ອງໃຫ້ບັນດາທ່ານຕ້ອງໄດ້ປະຕິບັດມາດຕະການ ທີ່ຄະນະສະເພາະກິດວາງອອກ ມີຄວາມຈໍາເປັນທີ່ສຸດ ທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດຢ່າງເຄັ່ງຄັດ ໂດຍສະເພາະ ບໍ່ໃຫ້ໂຮມຊຸມນຸມ, ບໍ່ຊຸມແຊວກັນເປັນກຸ່ມ, ຫ້າມຈັດກິດຈະກໍາເກີນ 20 ຄົນ, ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ການຮັກສາໄລຍະຫ່າງ, ໃສ່ຜ້າອັດປາກ-ດັງ, ລ້າງມືເລື້ອຍໆດ້ວຍສະບູ ແລະ ນໍ້າສະອາດ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70 ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ, ເຮັດການອະນາໄມຂ້າເຊື້ອຈຸດສ່ຽງ ເຊັ່ນ ຮາວຂັ້ນໃດ - ບ່ອນຈັບປະຕູ - ລີໂມດ ອື່ນໆ, ຖ້າຫາກທ່ານຮູ້ສຶກວ່າ ເປັນກຸ່ມສ່ຽງຕ້ອງຈໍາກັດບໍລິເວນຕົນເອງທັນທີ ພ້ອມທັງໄປກວດຊອກຫາເຊື້ອ, ເຖິງແມ່ນວ່າ ຜົນກວດຈະເປັນລົບກໍ່ຕາມ ຕ້ອງໄດ້ສືບຕໍ່ຈໍາກັດບໍລິເວນຕົນເອງ ຈົນຄົບກໍານົດ 14 ວັນ ຫຼື ກັບມາກວດຄືນຖ້າວ່າມີອາການຜິດປົກກະຕິ;

- ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນ ປະຕິບັດການດໍາລົງຊີວິດປົກກະຕິແບບໃໝ່ (new normal), ພວກເຮົາທຸກຄົນ ຕ້ອງຮ່ວມ ແຮງຮ່ວມໃຈ ແລະ ສາມັກຄີກັນ, ເພື່ອພ້ອມກັນຜ່ານຜ່າວິກິດນີ້ໄປດ້ວຍກັນ ແລະ ສາມາດ ກັບມາດໍາລົງຊີວິດປົກກະຕິໂດຍໄວ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈໍາວັນ ເສົາ ວັນທີ 4 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈ ມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)**